ພະຍາກອນ ວຽງຈັນ
20–27°C
ວັນຈັນ 09/11 · ເມກບາງສ່ວນ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນຈັນ 9 ພະຈິກ 2026 · ສະບັບທີ 017 | ສະຫຼຸບຂ່າວປະຈຳວັນສຸກ 6 – ວັນອາທິດ 8 ພະຈິກ 2026 · 20 ຂ່າວ | 18 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ເຫດການ** · 10:59 ໂມງ · ອ່ານ 39 ຄັ້ງ

ສະເທືອນໃຈ! ເກີດອຸบัดติเหตุ ลົดเมโดยสามตำช้างป่า ที่เมืองหินบูน เธ็ดให้มีผู้บาดเจ็บหลายสิมถอน ส่วนอาการช้างป่ายังต้องลำ้าข้มูนยืนยันจากเจ้าหน้าที่.



ເວລາປະມານ 20:40 ໂມງ ຂອງວັນທີ 5 ພະຈິກ 2026, ເກີດອຸบัดติบัดลิดเมโดยสาน ວຽງຈັນ-ปากเซ ตำช้างป่าอยู่ขอบเขดบ้านโพนไซ ເມືອງຫີນບຸນ ແຂວງຄຳມ່ວນ ເຮັດໃຫ້ລົດເມເສຍຫຼັກ ປີ້ນ ມີຜູ້ໂດຍສານໄດ້ຮັบบาดเจ็บหลายสิมถอน.

ຂໍ້ມູນເບື້ອງຕົ້ນ, ພະແນกตำหวอด ปภส ເມືອງ ຫີນບຸນ ລາຍงานให้รู้อ่า: ลิดเมโดยสานถันดั่งก่าว ป้ายทะบຽน บຂ 6499 ຂับขี่ โดยท้าว สีทิน ອາยุ 46 ปี ອาชีบขับลิด สันชาดลาว ปัดจุบันอยู่บ้านบาพู ลาว ເມືองถิงเซโดน ແຂวงสาละอัน ขับขี่มาจาก

ต่ໜ้า 2

◆ **ເຫດການ** · 14:41 ໂມງ

แผนเหือฮั้น! เจ้าของร้านเห้นก้อง CCTV ปะสานแห้ก ซี 6 ถัน ล้อมจับโจมงัดร้านเขดซั่งจรูง



ນะถอนหูวงวຽงจัน – ເกิดเหดการสุดตื่นเต้นใน ตอนเช้ามืด อันที่ 6 พะจิก 2026 เวลา 01:20 นาที ເมื่อผู้ใช้เฟสบุกชื่ Jojo Sisamout ได้โพสเล่า เหดการเตือนไพ ฮู้งถืกถินร้ายงัดร้านขายเถื่อง ที่ตั้งยู่ เส้นทาง T2 เขดซั่งจรูง ເมืองสีโถดตะบอง แต่สุดท้าย โจนไปบ่ลอด เพาะไซวพิบของเจ้าของร้าน แล ะ พะลัง พินละเมืองดิ.

ເจ้าของร้านเล่าว่า ในขะนะที่ถินเองกำลังเธ็ด

ต่ໜ้า 2

ในสะบับนี้

2 ເหดการ
2 ข่าวพายใน
4 เสดถะกิด-สังคิม
6 เต็กโนโลยี
7 สาละหน้ารู้
8 ข่าวต่างปะเหด
15 Uncategorized
17 มะหาสาน มื้นี้: น้ำมัน, เงิน, ถำ, หวย, อากาด
18 กีลา



◆ **ข่าวต่างปะเหด** · 13:33 ໂมງ

อุทาหอม! สาวถืกแมอสุดรักหมัก 6 กิโล ถืบห้อง จับถ...

อ่านหน้า 8 ▸



◆ **ເหดการ** · 10:11 ໂมງ

ภวดยึด ใบกะท่อม และ ม้ายาถีไอ ยู่ลิด บับทุก 22 ล้้ พ้อม...

อ่านหน้า 5 ▸



◆ **ข่าวต่างปะเหด** · 14:28 ໂมງ

หมากบัดเป็นเหด! เซ็บอีตาลียอมถ้าอรูก ถ้ากว่ายอมใส่...

อ่านหน้า 10 ▸

ໂຄສະນາ
ให้แบธมของท่าน ยู่หน้า 1 ทุกเช้า
โถสะนาใน ມะหาสาน ลายอัน — หนังสือพิม PDF ที่ถินลาจดาอโหูด และ ธับทางอิเมอ ทุกเช้า
WhatsApp 020 5888 6182

ສະເທືອນໃຈ! ເກີດອຸບັດຕິເຫດ ລົດເມໂດຍສານຕຳຊ້າງປ່າ ທີ່ເມືອ... (ຕໍ່ຈາກໜ້າ 1)

ນະຄອນຫຼວງວຽງຈັນ ຈຸດປະສົງຈະມຸ່ງໜ້າໄປແຂວງຈຳປາສັກ ໂດຍມີຄົນໂດຍສານມາ ນຳກັນທັງໝົດ 26 ຄົນ, ຄົນຕ່າງປະເທດ 2 ຄົນ ຍິງ1 ຄົນ , ພໍຂັບຂີ່ມາຮອດ ຂອບເຂດບ້ານໂພນໄຊ ເມືອງຫີນບຸນ ແຂວງຄຳມ່ວນ ໄດ້ເກີດອຸບັດຕິເຫດຕຳຊ້າງ ປ່າ ເຮັດໃຫ້ລົດເສຍຫຼັກປີ້ນລົງແຄມທາງ ມີຄົນບາດເຈັບສາຫັດ 1 ຄົນ, ບາດເຈັບ ສົມຄວນ 7 ຄົນ, ບາດເຈັບເລັກນ້ອຍ 19 ຄົນ ແລະ ຊ້າງໄດ້ຮັບບາດເຈັບຫຼາຍ ສົມຄວນ.

ພາຍຫຼັງເກີດອຸບັດຕິບັດ ທາງ ເຈົ້າໜ້າທີ່ວິຊາສະເພາະໄດ້ກວດກາຕາມ ຫຼັກວິຊາສະເພາະ, ພ້ອມທັງກັກຕົວຜູ້ຂັບຂີ່ ມາສືບສວນ-ສອບສວນ ຢູ່ກອງບັນຊາການ ປກສ ເມືອງຫີນບຸນ, ສ່ວນລົດເມ ໂດຍສານແມ່ນຍັງບໍ່ສາມາດເຄື່ອນຍ້າຍໄດ້.

ຂ່າວ: ຄວາມສະຫງົບ

ແສບເໜືອຊັ້ນ! ເຈົ້າຂອງຮ້ານເຫັນກ້ອງ CCTV ປະສານແທ້ກຊີ ... (ຕໍ່ຈາກໜ້າ 1)

ວຽກຢູ່ບ້ານສາລາຄຳ ເມືອງຫາດຊາຍຟອງ ໄດ້ເປີດເບິ່ງກ້ອງວົງຈອນປິດ (CCTV) ຢູ່ຮ້ານ ແລະ ພົບເຫັນຄົນຮ້າຍກຳລັງງັດແງະ ເຂົ້າໄປທາງໃນ. ຍ້ອນໄລຍະທາງຈາກບ້ານ ໄປຫາຮ້ານຂ້ອນຂ້າງໄກ ຕົນເອງຈຶ່ງຕັດສິນ ໃຈແກ້ໄຂສະຖານະການຢ່າງໄວວາ ດ້ວຍ ການໂທປະສານຂໍຄວາມຊ່ວຍເຫຼືອຈາກໄຊ ເຟີລິດແທ້ກຊີ ທີ່ຢູ່ໃກ້ບໍລິເວນຮ້ານ ຈຳນວນ 6 ຄັນ ໃຫ້ຟ້າວໄປຈອດອ້ອມ ຮ້ານໄວ້ກ່ອນ ໃນລະຫວ່າງທີ່ຕົນເອງກຳລັງ ເດີນທາງໄປ.


ເມື່ອເຈົ້າຂອງຮ້ານໄປຮອດ ຈຶ່ງໄດ້ ຮ່ວມກັບກຸ່ມໄຊເຟີແທ້ກຊີແບ່ງກັນຄົ້ນຫາ ຄົນຮ້າຍ. ເມື່ອໂຈນຮູ້ໂຕໄດ້ແລ່ນຫຼົບໜີໄປ ທາງຕະຫຼາດຊັ້ງຈຽງ ທາງກຸ່ມເຈົ້າຂອງຮ້ານ ແລະ ແທ້ກຊີຈຶ່ງໄດ້ແລ່ນໄລ່ຕາມ ເຊິ່ງໃນ ເວລານັ້ນມີພົນລະເມືອງດີທີ່ເຫັນເຫດການ ໄດ້ເຂົ້າມາຊ່ວຍສະກັດ ແລະ ຈັບຕົວຄົນ ຮ້າຍໄວ້ໄດ້ທັນຄ້ວນ.

ຫຼັງຈາກຄວບຄຸມໂຕໄດ້ແລ້ວ, ເຈົ້າ ຂອງຮ້ານໄດ້ແຈ້ງໃຫ້ເຈົ້າໜ້າທີ່ຕຳຫຼວດ ເຂົ້າມານຳໂຕຜູ້ກ່ຽວໄປດຳເນີນຄະດີ ແລະ ສືບສວນ-ສອບສວນ ຕາມຂັ້ນຕອນຂອງ ກົດໝາຍຕໍ່ໄປ.

ຂ່າວພາຍໃນ

ຂ່າວພາຍໃນ · 16:32 ໂມງ · ອ່ານ 22 ຄັ້ງ

ນະຄອນຫຼວງວຽງຈັນ ພົບເຫັນພະນັກງານ ສໍ້ລາດບັງຫຼວງ 12 ຄົນເສຍຫາຍ 1.7ຕື້ກີບ ແລະ ປະຕິບັດວິໄນ 31 ຄົນ



ກອງປະຊຸມສະຫຼຸບວຽກງານກວດກາ 5 ປີ (2021-2025) ທົ່ວ ນະຄອນຫຼວງວຽງຈັນ ຄັ້ງທີ IV ຈັດຂຶ້ນ ວັນທີ 6 ພະຈິກ 2026 ທີ່ຫ້ອງວ່າການ ປົກຄອງນະຄອນຫຼວງວຽງຈັນ ໂດຍເປັນ ປະທານຂອງທ່ານ ວັນໄຊ ພອງສະຫວັນ

ທ່ານ ບຸນເພັງ ສີນະວົງພອນ ຂຶ້ນ ຜ່ານຮ່າງບົດສະຫຼຸບວຽກງານກວດກາ 5 ປີ (2021-2025) ແລະ ທິດທາງ ແຜນການ 5 ປີ (2026-2030) ເຊິ່ງ ທ່ານກ່າວບາງຕອນວ່າ: ຄະນະກວດກາພັກ ໄດ້ຕິດຕາມ ກວດກາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ການ ຈັດຕັ້ງປະຕິບັດການກໍ່ສ້າງພື້ນຖານໂຄງລ່າງ ໂຄງການລົງທຶນຂອງລັດ ໂດຍສະເພາະ ການຈັດຕັ້ງປະ ຕິບັດໂຄງການລົງທຶນຂອງ ລັດ ໃນໄລຍະ 5 ປີຜ່ານມາ ທົ່ວນະ ຄອນ ຫຼວງວຽງຈັນ ໄດ້ສະເໜີໂຄງການລົງທຶນ ເຂົ້າແຜນງົບປະ ມານ ຈຳນວນ 1.217 ໂຄງການ ລວມມູນຄ່າ 2.406.653,94 ຕື້ກີບ ໄດ້ມີການຄົ້ນຄວ້າຍົກເລີກຍັບຍັ້ງ ໂຄງການທີ່ໝົດໄລຍະການຈັດຕັ້ງປະຕິບັດ ຈຳນວນ 71 ໂຄງການ ມູນຄ່າ 155,44 ຕື້ກີບ ໄດ້ດຳເນີນການຮັບຮອງຜົນການ ປະເມີນໂຄງການຂັ້ນນະຄອນຫຼວງວຽງຈັນ ຈຳນວນ 43 ຄັ້ງ ອອກໃບຢັ້ງຢືນຜົນການ ປະເມີນ ຈຳນວນ 513 ໂຄງການ.

ກ່ຽວກັບປະກົດການສໍ້ລາດບັງຫຼວງ ມີທັງໝົດ 67 ກໍລະນີ ກວດກາພົບເຫັນ ຂໍ້ມູນຫຼັກຖານການສໍ້ລາດບັງຫຼວງ ທີ່ ມີການສວຍໃຊ້ໜ້າທີ່ຕຳແໜ່ງຂອງ ພະນັກງານ ຈຳນວນ 12 ຄົນ ໄດ້ດຳເນີນ ການແກ້ໄຂເກັບກູ້ເງິນ ແລະ ອັດຖະທີ່ ເສຍຫາຍກັບຄືນໃຫ້ລັດ ບຸກຄົນ ແລະ ການຈັດຕັ້ງໄດ້ທັງໝົດ ຈຳນວນ 1,7 ຕື້ ກີບ ແລະ ສະເໜີປະຕິບັດວິໄນຕໍ່ຜູ້ ລະເມີດ ທັງໝົດ 31 ຄົນ.

◆ ຂ່າວພາຍໃນ · 10:59 ໂມງ · ອ່ານ 15 ຄັ້ງ

ຊີ້ແຈງແລ້ວ!! ກໍລະນີເຫດການອ່າງສານເຄມີຮົ່ວໄຫຼລົງນ້ຳແອ່ນ ຄວາມຈິງແລ້ວເປັນພຽງນ້ຳທີ່ນຳໃຊ້ເຂົ້າໃນການຜະລິດ ແຕ່ເກີດຝົນຕົກໜັກເຮັດໃຫ້ນ້ຳໄຫຼຊຸອອກ.



ໃນວັນທີ 04/11/2026 ຄະນະນຳແຂວງຫົວພັນ ລົງຕິດຕາມຈຸດເກີດເຫດ ແລະ ຈັດກອງປະຊຸມປຶກສາຫາລື ແກ້ໄຂບັນຫາ ອ່າງເກັບນ້ຳຂອງ ບໍລິສັດ ລາວ-ຈີນ ພັດທະນາ ແຮ່ທາຍາກ ພາກເໜືອ 2 ຈຳກັດ ຕາມການລາຍງານ ເບື້ອງຕົ້ນລະບຸວ່າ: ເຫດການເກີດຂຶ້ນໃນຊ່ວງເຊົ້າມືດ ຂອງ ວັນທີ 2 ພະຈິກ 2026 ເປັນເຫດສຸດວິໄສ ເນື່ອງຈາກຝົນ ຕົກໜັກຢູ່ເຂດ ພູສີງຊັນ ສະພາບດິນຊາຍເກີດຍຸບໂຕ ແລະ ໄຫຼຊຸ ລົງສູ່ອ່າງເກັບນ້ຳ

ທຳມະຊາດ ເຊິ່ງເປັນຫ້ວຍນ້ຳທີ່ບໍລິສັດເຮັດຂັ້ນຄູກັນ ໄວ້ ເພື່ອດູດນ້ຳໃຊ້ເຂົ້າໃນການຜະລິດ ບໍ່ແມ່ນອ່າງເຄມີ ຕາມ ທີ່ມີຂ່າວລືໃນສື່ອອນລາຍ ເຫດການດັ່ງກ່າວ ເຮັດໃຫ້ທໍ່ດູດ ແລະ ທໍ່ສົ່ງນ້ຳແຕກຫັກ ແລ້ວໄຫຼເຊາະໃສ່ຂັ້ນຄູອ່ຽ ເຮັດໃຫ້ ນ້ຳປະມານ 1000 ກວ່າແມັດກ້ອນ ພ້ອມຕະກອນດິນໄຫຼ ສູ່ອອກສູ່ຫ້ວຍດົງດຸ່ມ ແລະ ຫ້ວຍນ້ຳແອ່ນ ເຮັດໃຫ້ເກີດນ້ຳຂຸ່ນ ເຫດການນີ້ໄດ້ສ້າງ ຄວາມກັງວົນໃຈໃຫ້ກັບພໍ່ແມ່ປະຊາຊົນ ແລະ ໄດ້ສົ່ງຜົນກະທົບໂດຍກົງຕໍ່ເນື້ອທີ່ ທຳການຜະລິດ ໂດຍສະເພາະເນື້ອທີ່ນາ ຂອງປະຊາຊົນບ້ານທັບເຜິ້ງ ຈຳນວນ 2 ຄອບຄົວ.

ຕໍ່ສະພາບການດັ່ງກ່າວທາງຄະນະ ຮັບຜິດຊອບໄດ້ລົງກວດກາສະພາບການດັ່ງ ກ່າວຢູ່ 2 ຈຸດຄື: ຈຸດຫ້ວຍດົງດຸ່ມ ຫ່າງຈາກຈຸດເກີດເຫດ 900 ແມັດ (ສາຍ ນ້ຳຂຸ່ນຫຼາຍ) ຈຸດທີ 2 ຫ້ວຍຜາບຸດ ຫ່າງຈາກຈຸດເກີດເຫດ 1,5 ກິໂລແມັດ (ສາຍນ້ຳຂຸ່ນເລັກນ້ອຍ) ເຊິ່ງທັງ 2 ຈຸດ ບໍ່ ພົບສັດນ້ຳ ຫຼື ສັດປົກຕາຍ.

ຜົນການວິໄຈຄຸນນະພາຍນ້ຳ ເບື້ອງຕົ້ນໂດຍລວມແມ່ນຢູ່ໃນເກນ ມາດຕະຖານສິ່ງແວດລ້ອມ (ແຕ່ຄ່ານ້ຳ ເກືອ ຄວາມເຄັ່ມ ທີ່ພົບໃນລະດັບ ມາດຕະຖານ ຊີ້ໃຫ້ເຫັນວ່າ: ອາດມີການນ ຮົ່ວຊຶມຂອງນ້ຳເກືອ ຈາກດິນເຈື່ອນຢູ່ເຂດ ຂຸດຄົ້ນເກົ່າ ຢ່າງໃດກໍຕາມລະບົບນິເວດຍັງ ບໍ່ຖືກທຳລາຍຮ້າຍແຮງ ປັດຈຸບັນຍັງລໍຖ້າ ຜົນການຢັ້ງຢືນຢ່າງເປັນທາງການ ຈາກ ສະຖາບັນວິໄຈຄຸນນະພາບນ້ຳແຫ່ງຊາດ ເພື່ອແຈ້ງໃຫ້ປະຊາຊົນຮັບຊາບຕື່ມ.

ຈາກຜົນກະທົບໃນເບື້ອງຕົ້ນ ບໍລິສັດໄດ້ເລັ່ງປະສານສົມທົບກັບວິຊາການ ພາກສະໜາມແກ້ໄຂຢ່າງຕັ້ງໜ້າ ໂດຍການ ຕັດລະບົບທໍ່ນ້ຳ, ສ້ອມແປງທໍ່ທີ່ແຕກຫັກ, ສ້າງຄູກັນນ້ຳ, ດູດນ້ຳທີ່ຄ້າງຢູ່ກັບຄືນອ່າງ ແລະ ສົ່ງພະນັກງານຕິດຕາມສະພາບນ້ຳຢ່າງ ຕໍ່ເນື່ອງ.

ນອກຈາກນີ້ທາງ ບໍລິສັດດັ່ງກ່າວຈະ ທົດແທນຄ່າເສຍຫາຍກັບ 2 ຄອບຄົວ ທີ່ ໄດ້ຮັບຜົນກະທົບ ຢ່າງຖືກຕ້ອງຕາມ ກົດໝາຍ, ພ້ອມນີ້ຄະນະນຳແຂວງຫົວພັນ ໄດ້ສະເໜີໃຫ້ບໍລິສັດ ເພີ່ມທະວີການກວດ ກາ ແລະ ປັບປຸງອ່າງນ້ຳເກືອຕ່າງໆ ໃນເຂດ ສຳປະທານໃຫ້ຖືກຕ້ອງ ຕາມມາດຕະຖານ ເຕັກນິກຢ່າງເຂັ້ມງວດ ເພື່ອປ້ອງກັນບໍ່ໃຫ້ ເກີດເຫດການຄືນອີກ ແລະ ໃຫ້ເກັບ ຕົວຢ່າງນ້ຳທັງໃນ ແລະ ນອກເຂດສຳ ປະທານ ຢ່າງປົກກະຕິເພື່ອເປັນຖານຂໍ້ມູນ ອ້າງອີງ.

ທີ່ມາ: ໂທລະພາບແຂວງຫົວພັນ

◆ ຂ່າວພາຍໃນ · 15:41 ໂມງ · ອ່ານ 10 ຄັ້ງ

ມຊ ສະຫຼອງຄົບຮອບ 30 ປີ ທ່ານ ທອງລຸນ ສີສຸລິດ ຊີ້ນຳ 5 ທິດທາງ ຍົກລະດັບຄຸນນະພາບການສຶກສາໃນຍຸກໃໝ່



ວັນທີ 6 ພະຈິກ 2026 ຢູ່ມະຫາວິທະຍາໄລ ແຫ່ງຊາດ (ມຊ) ໄດ້ມີພິທີສະເຫຼີມສະຫຼອງວັນສ້າງຕັ້ງ ມະຫາວິທະຍາໄລແຫ່ງຊາດ ຄົບຮອບ 30 ປີຂຶ້ນຢ່າງເປັນ ທາງການ ໂດຍໃຫ້ກຽດເຂົ້າຮ່ວມ ແລະ ກ່າວໂອ້ລົມໃຫ້ ທິດຊີ້ນຳຂອງສະຫາຍ ທອງລຸນ ສີສຸລິດ ເລ ຂາທິການໃຫຍ່ ປະທານປະເທດ ແຫ່ງ ສປປ ລາວ ມີບັນດາສະ ຫາຍການ ນຳ ອາດີດການນຳພັກ-ລັດ ຄະນະພັກ-ຄະນະນຳກະ ຊວງ ສຶກສາທິການ ແລະ ກິລາ ຄັ່ນແຖວຄູ-ອາຈານ ພະນັກງານ ແລະ ນັກສຶກສາເຂົ້າຮ່ວມ.

ໃນໂອກາດນີ້ ສະຫາຍ ເລຂາທິການໃຫຍ່ ປະທານ ປະເທດ ໄດ້ຂຶ້ນປາໄສ ແລະ ຍົກໃຫ້ເຫັນ ປະຫວັດສາດ ແລະ ການເຕີບໃຫຍ່ຂະ ຫຍາຍຕົວຂອງ ມຊ ເຊິ່ງເປັນ ສະຖາບັນການສຶກສາຂັ້ນສູງ ລະ ດັບຊາດແຫ່ງທຳອິດ ໂດຍ ເລີ່ມຈາກການປະກາດສ້າງຕັ້ງ ໃນປີ 1995 ແລະ ເປີດດຳ ເນີນການ ໃນວັນທີ 5 ພະຈິກ 1996 ຕະ ຫຼອດ 30 ປີ ຜ່ານມາ ມຊ ໄດ້ສ້າງບຸກຄະລາກອນ ສຳ ເລັດການ ສຶກສາ ອອກຮັບໃຊ້ ປະເທດຊາດແລ້ວຫຼາຍກວ່າ 142.910 ຄົນ ມີ 13 ຄະນະວິຊາ ມີ 265 ຫຼັກສູດ ແລະ ຄັ່ນແຖວຄູ- ອາຈານ ທີ່ມີລະດັບ ຄວາມຮູ້ຄວາມສາມາດສູງ.

ເພື່ອຕອບສະໜອງ ຄວາມ ຮຽກຮ້ອງຕ້ອງການຂອງການພັດ ທະນາ ປະເທດຊາດ ໃນຍຸກໃໝ່ ສະຫາຍ ທອງ ລຸນ ສີສຸລິດ ໄດ້ເນັ້ນໃສ່ 5 ທິດທາງ ແລະ ຂໍ້ຄິດສຳຄັນຄື: ໃຫ້ຖືເອົາການສຶກສາ ເປັນ ຮາກຖານຂອງອະນາຄົດ ການພັດທະນາ ມຊ ຕ້ອງຕິດພັນກັບ ມູນເຊື້ອປະຕິວັດ ສ້າງຄູ ແລະ ນັກສຶກສາ ໃຫ້ມີອຸດົມການ ເມືອງໜັກແຮງ ຮັກຊາດ ແລະ ພັດທະນາ ບຸກຄະລາກອນ ຕາມ 3 ລັກສະນະ (ລັກສະນະຊາດ ວິທະຍາສາດ-ທັນສະໄໝ ລັກສະ ນະມະຫາຊົນ) ແລະ 5 ຫຼັກມູນ (ຄຸນສົມບັດ ປັນຍາ ແຮງງານ ພະ ລະ ສີລະປະສຶກສາ). ພັດທະນາຫຼັກສູດ ແລະ ວິທີສິດສອນ: ປັບປຸງຫຼັກສູດ ໃຫ້ ສອດຄ່ອງກັບ ທ່າແຮງຊາດ ແລະ ຄວາມ ຕ້ອງການຂອງ ສັງຄົມ ທັນຈາກການຖ່າຍ ທອດ ຄວາມຮູ້ພຽງຢ່າງດຽວ ໄປສູ່ການສ້າງ ຄວາມຄິດ ວິເຄາະ-ວິໄຈ ການແກ້ ໄຂ ບັນຫາ ຄວາມຄິດສ້າງສັນ ແລະ ສູ້ຊົນຍົກ ລະດັບ ຈັດອັນດັບມະຫາວິທະຍາໄລໃຫ້ດີ ຂຶ້ນໃນລະດັບພາກພື້ນ ແລະ ສາກົນ.

ຍົກລະດັບການຄົ້ນຄວ້າ ວິທະຍາສາດ: ສ້າງ ມຊ ໃຫ້ເປັນສູນກາງ ດ້ານປັນຍາ ຂອງຊາດ ຊຸກຍູ້ການຄົ້ນຄວ້າ ໃນຂະແໜງການ ປາຍ ແຫຼມຊັ້ນ: ກະສິກຳ ອຸດສາຫະກຳ ພະລັງງານ ສິ່ງແວດລ້ອມ ເສດຖະກິດດິຈິຕອນ ໂດຍ ໃຫ້ຜົນການຄົ້ນຄວ້າ ສາມາດນຳໄປ ໃຊ້

ຕໍ່ໜ້າ 4

ມຊ ສະຫຼອງຄົບຮອບ 30 ປີ ທ່ານ ທອງລຸນ ສີສຸລິດ ຊີ້ນຳ 5 ທິດ... (ຕໍ່ຈາກໜ້າ 3)

ປະໂຫຍດ ໄດ້ຈີ່ງ ສ້າງຄູ-ອາຈານໃຫ້ມີຄຸນະພາບສູງ: ເພາະຄູ-ອາຈານ ແມ່ນປັດໃຈຕັດສິນຄຸນະພາບ ຕ້ອງສົ່ງເສີມ ທັກສະດີຈີຕອນ ພາສາຕ່າງປະເທດ ຈັນຍາບັນ-ຈັນຍາທຳ ແລະ ມີກົນ ໄກ ດຶງດູດ ຮັກສາ ບຸກຄະລາກອນ ຜູ້ທີ່ມີຄວາມຮູ້ ຄວາມສາມາດ. ສ້າງສະພາບແວດລ້ອມ ເອື້ອອຳນວຍ ປັບປຸງ ພື້ນຖານໂຄງລ່າງ ຫ້ອງຮຽນ ຫ້ອງທົດລອງ ຫໍສະໝຸດ ຫໍພັກ ໃຫ້ທັນສະໄໝ ແລະ ມີຄວາມເປັນລະບຽບສະອາດງາມຕາ ເພື່ອເປັນແວ່ນແຍງໃຫ້ສັງຄົມ.

ພ້ອມດຽວກັນນີ້ ສະຫາຍ ເລຂາທິການໃຫຍ່ ປະທານປະເທດ ຍັງໄດ້ຍົກໃຫ້ເຫັນ ເຫດການປະຫວັດສາດ ທີ່ ສປປ ລາວ ກຳ ລັງເດີນໜ້າຈະຫຼຸດພົ້ນອອກຈາກ ສະຖານະພາບ ປະເທດດ້ອຍພັດທະນາ (LDC) ຢ່າງເປັນທາງການ ໃນທ້າຍປີ 2026 ນີ້ ເຊິ່ງຖືເປັນທັງຄວາມພາກພູມໃຈ ແລະ ຄວາມທ້າທາຍ ທີ່ຕ້ອງເພິ່ງພາ ຕົນເອງເປັນຫຼັກ ດັ່ງນັ້ນ ມຊ ຕ້ອງເປັນກຳລັງແຮງຕົ້ນຕໍ ໃນການຜະລິດ ຊັບພະຍາກອນມະນຸດ ທີ່ມີຄຸນະພາບ ເພື່ອຂັບເຄື່ອນ ປະເທດຊາດ ໃຫ້ກ້າວໄປຢ່າງໝັ້ນທ່ຽງ.

ໃນຕອນທ້າຍສະຫາຍ ຍັງໄດ້ເນັ້ນຍ້ຳຕື່ມໃຫ້ ກະຊວງສຶກສາທິ ການ ແລະ ກິລາ ພ້ອມດ້ວຍ ມຊ ຄົ້ນຄວ້າ ແລະ ແກ້ໄຂສາເຫດ ທີ່ເຮັດໃຫ້ ຈຳນວນນັກສຶກສາ ຫຼຸດລົງ ແລະ ຮຽກຮ້ອງໃຫ້ ຄະນະພັກ-ຄະນະນຳ ຄູ-ອາຈານ ແລະ ນັກສຶກສາ ທຸກຄົນ ຈົ່ງຍົກ ສູງຄວາມຮັບຜິດຊອບ ກ້າຄິດ ກ້າເຮັດ ກ້າປັບປຸງ ຕັ້ງໃຈຮຽນຮູ້ ແລະ ຝຶກຝົນຕົນເອງ ເພື່ອສ້າງ ມຊ ໃຫ້ກາຍເປັນສະຖາບັນແຖວໜ້າ ເປັນຄັງປັນຍາ ແລະ ເປັນແຫຼ່ງສ້າງບຸກຄະລາກອນ ທີ່ມີຄຸນ ນະພາບ ສາມາດທຽບເທົ່າສາກົນເທື່ອລະກ້າວ.

ຂ່າວ: ວຽງຈັນໃຫມ່

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ເສດຖະກິດ-ສັງຄົມ

◆ ເສດຖະກິດ-ສັງຄົມ · 09:56 ໂມງ · ອ່ານ 11 ຄັ້ງ

ເຊກອງ ທຳລາຍສິນຄ້າໝົດອາຍຸ ເສື່ອມຄຸນນະພາບ



ແຫລ່ງຂ່າວຈາກ ແຂວງເຊກອງ ໃຫ້ຮູ້ວ່າ: ພິທີທຳລາຍສິນຄ້າໝົດອາຍຸ ເສື່ອມຄຸນນະພາບ ຈັດຂຶ້ນໃນວັນທີ 5 ພະຈິກ 2026 ທີ່ພະແນກສາທາລະນະສຸກ ແຂວງເຊກອງ ໂດຍມີທ່ານ ດຣ. ນາງ ລຳພັນ ໄຊຄຳມີ ຫົວໜ້າ ພະແນກສາທາລະນະສຸກແຂວງ, ມີຄະນະກຳມະການລົງກວດກາ ຕິດຕາມ ແລະ ຊຸກຍູ້ ພ້ອມດ້ວຍພະນັກງານ ຂະແໜງອາຫານ ແລະ ຢາ ເຂົ້າຮ່ວມ.

ທ່ານ ເພັດສະໝອນ ແພງສຸລິພັນ ຫົວໜ້າຂະແໜງອາຫານ ແລະ ຢາ ລາຍງານວ່າ: ນັບແຕ່ວັນທີ 27-30 ຕຸລາ 2026 ຂະແໜງອາຫານ ແລະ ຢາ ພ້ອມດ້ວຍຄະນະກຳມະການຕິດຕາມ ກວດກາ ແລະ ຊຸກຍູ້ ໄດ້ລົງເຄື່ອນໄຫວກວດກາສານປົນເປື້ອນໃນອາຫານ, ອາຫານເສື່ອມຄຸນນະພາບ ແລະ ອາຫານໝົດອາຍຸການນຳໃຊ້ ຊຶ່ງໄດ້ມີການຕິດຕາມ ກວດກາ ຢູ່ຕາມຫ້າງຮ້ານ ຂາຍຍົກ-ຂາຍຍ່ອຍ, ຕະຫລາດສົດເທສະບານແຂວງ ລວມທັງການຈໍລະຈອນສິນຄ້າ 54 ຮ້ານ, ໄດ້ກວດພົບສິນຄ້າໝົດອາຍຸ ໃນ 42 ຮ້ານ, ມີ 209 ລາຍການ ລວມມູນຄ່າ 32,8 ລ້ານກວ່າກີບ, ພົບການລັກລອບນຳເຂົ້າສິນຄ້າ ທີ່ບໍ່ໄດ້ຮັບອະນຸຍາດ ມາວາງຂາຍອີກຈຳນວນໜຶ່ງ. ທັງນີ້ກໍເພື່ອຊຸກຍູ້ໃຫ້ຜູ້ປະກອບການຜະລິດແລະ ຜູ້ປະກອບການຂາຍສະບຽງອາຫານ ເປັນເຈົ້າການປະຕິບັດໃຫ້ຖືກຕ້ອງ ສອດຄ່ອງຕາມລະບຽບຫລັກການ ເພື່ອຮັບປະກັນ

ຕໍ່ໜ້າ 5

ເຊກອງ ທຳລາຍສິນຄ້າໝົດອາຍຸ ເສີມຄຸນນະພາບ ... (ຕໍ່ຈາກໜ້າ 4)

ຄຸນນະພາບອາຫານ ແລະ ຄວາມປອດໄພ ຂອງຜູ້ບໍລິໂພກ.

ທ່ານ ດຣ. ນາງ ລຳພັນ ໄຊຄຳມີ ໄດ້ ກ່າວວ່າ: ຄະນະພັກ-ຄະນະນຳພະແນກ ສາທາລະນະສຸກແຂວງ ກໍໄດ້ເອົາໃຈໃສ່ຊີ້ ນຳຂະແໜງການທີ່ກ່ຽວຂ້ອງ ໂດຍ ສະເພາະ ຂະແໜງອາຫານ ແລະ ຢາ ລົງ ເຮັດໜ້າທີ່ ພ້ອມຄະນະກຳມະການ ເພື່ອ ຕິດຕາມ ກວດກາບັນດາສິນຄ້າຕ່າງໆ ຕາມ ຫ້າງຮ້ານໃນແຕ່ໄລຍະ ທັງນີ້ກໍເພື່ອຊຸກຍູ້ ໃຫ້ຜູ້ປະກອບການຜະລິດ ແລະ ຜູ້ ປະກອບການຂາຍສະບຽງອາຫານ ໄດ້ເປັນ ເຈົ້າການປະຕິບັດໃຫ້ຖືກຕ້ອງ ສອດຄ່ອງ ຕາມລະບຽບຫລັກການ ເພື່ອຮັບປະກັນ ຄຸນນະພາບອາຫານ ແລະ ຄວາມປອດໄພ ຜູ້ບໍລິໂພກ, ຊຶ່ງໃນຕໍ່ໜ້ານີ້, ທາງຂະແໜງ ການ

ກ່ຽວຂ້ອງ ແລະ ຄະນະກຳມະການ ຈະໄດ້ສືບຕໍ່ປະສານສົບທົບກັນ ລົງ ເຄື່ອນໄຫວກວດກາສິນຄ້າທີ່ມີຄວາມສ່ຽງ ຢ່າງຕໍ່ເນື່ອງ ພ້ອມນຳເອົານິຕິກຳທີ່ກ່ຽວພັນ ລົງເຜີຍແຜ່ຜັນຂະຫຍາຍ ເພື່ອສ້າງຄວາມ ຮັບຮູ້ ຄວາມເຂົ້າໃຈໃຫ້ແກ່ຜູ້ປະກອບ ການ ຢ່າງກວ້າງຂວາງ. ພ້ອມນີ້, ກໍ ຮຽກຮ້ອງມາຍັງເຈົ້າຂອງຫ້າງຮ້ານຄ້າຕ່າງໆ ຈົ່ງເປັນເຈົ້າການ ຊ່ວຍກັນໃນການ ປະຕິບັດລະບຽບຫລັກການ, ຂາຍສິນຄ້າທີ່ ມີຄຸນນະພາບ, ຊື້ຜະລິດຕະພັນຈາກແຫລ່ງ ຜະລິດທີ່ຖືກຕ້ອງ, ມີສະຫລາກລະບຸ ວັນ, ເດືອນ, ປີ ຜະລິດ ແລະ ວັນ, ເດືອນ, ປີ ໝົດອາຍຸການນຳໃຊ້. ນອກນັ້ນ, ກໍຕ້ອງມີ ເອກະສານທະບຽນການຄ້າຖືກຕ້ອງ ເພື່ອ ອຳນວຍຄວາມສະດວກໃນການກວດກາ ສິນຄ້າ ຢ່າງຖືກຕ້ອງຕາມລະບຽບການ.

ຂ່າວ: ອັດສະວິນ

ເຫດການ

◆ ເຫດການ · 10:11 ໂມງ · ອ່ານ 28 ຄັ້ງ

ກວດຢຶດ ໃບກະທ່ອມ ແລະ ນ້ຳຢາດີໄອ ຢູ່ລົດບັນທຸກ 22 ລໍ້ ພ້ອມກັກຕົວຜູ້ຮ່ວມ ຂະບວນການໄດ້ 3 ຄົນ



ເມື່ອບໍ່ດົນມານີ້, ກອງບັນຊາການ ປກສ ເມືອງປາກກະດິງ ແຂວງບໍລິຄຳໄຊ ໄດ້ຮັບແຫລ່ງຂ່າວຈາກພົນລະເມືອງດີ ວ່າ ມີກຸ່ມຄົນຈຳນວນໜຶ່ງທີ່ເຄື່ອນໄຫວ ຄ້າ-ຂາຍ ແລະ ຂົນສົ່ງພືດທີ່ໃຫ້ສານເສບຕິດ ທີ່ອອກລິດຕໍ່ຈິດປະສາດ (ໃບກະທ່ອມ ແລະ ນ້ຳຢາດີໄອ) ໂດຍໃຊ້ລົດບັນທຸກ 22 ລໍ້ ສີຂາວ-ແດງ ເພື່ອໃຊ້ໃນການຂົນສົ່ງ. ຈາກນັ້ນ, ກອງບັນຊາການ ປກສ ເມືອງ ປາກກະດິງ ຈຶ່ງໄດ້ລົງຕິດຕາມ

ມາຮອດເວລາປະມານ 07:00 ໂມງ ຂອງວັນດຽວກັນ ເຈົ້າໜ້າທີ່ຈຶ່ງພົບ ເຫັນລົດຄັນດັ່ງກ່າວ ຂັບຂີ່ມາແຕ່ ແຂວງ ສະຫວັນນະເຂດ ຕາມເສັ້ນທາງເລກ 13 ໃຕ້ ມຸ່ງໜ້າໄປນະຄອນຫລວງວຽງຈັນ. ພໍ ຮອດເຂດ ບ້ານໂພນຈະເລີນ ເມືອງປາກ ກະດິງ ເຈົ້າໜ້າທີວິຊາສະເພາະຈຶ່ງໄດ້ລັດ ລົດຄັນດັ່ງກ່າວ ເຂົ້າກວດກາ ຈຶ່ງພົບເຫັນ ເຄື່ອງຂອງກາງ ປະເພດຢາເສບຕິດ (ຢາ ບ້າ) ຈຳນວນ 12 ເມັດ, ໃບກະທ່ອມ ຈຳນວນ 13 ເປົ໋າ ແລະ 4 ຖົງດຳບ້ອຍ ລວມນ້ຳໜັກໄດ້ 144 ກິໂລ ແລະ ນ້ຳຢາ ດີໄອຈຳນວນ 2,900 ແກ້ວ ແລະ ຈັບກຸມເປົ້າໝາຍ ຊື່ ທ້າວ ພຸດສະດີ (ກີ້) ຄຳພະຈັນ ອາຍຸ 33 ປີ, ອາຊີບ ກຳມະກອນ ຢູ່ບ້ານເຊໂນ ເມືອງອຸທຸມ ພອນ ແຂວງສະຫວັນນະເຂດ (ໂຊເຟີລົດ ບັນທຸກ).

ຈາກນັ້ນ, ເຈົ້າໜ້າວິຊາສະເພາະຈຶ່ງ ໄດ້ຂະຫຍາຍຜົນຫາກຸ່ມແກ້ງພັກພວກ ຮ່ວມຂະບວນການດຽວກັນ ທີ່ສັ່ງຊື້ພືດທີ່ ໃຫ້ສານເສບຕິດ (ໃບກະທ່ອມ ແລະ ນ້ຳ ຢາດີໄອ) ຈຶ່ງສາມາດກັກຕົວຜູ້ຮ່ວມ ຂະບວນການໄດ້ອີກຈຳນວນ 2 ຄົນຄື: ທ້າວ ເຕ່ ສີບຸນເຮືອງ ອາຍຸ 18 ປີ, ອາຊີບ ເຮັດນາ ຢູ່ບ້ານໂພນຈະເລີນ ເມືອງປາກ ກະດິງ ແຂວງບໍລິຄຳໄຊ ແລະ ທ້າວ ລິໂອ ອິນທອງທິລາດ ອາຍຸ 23 ປີ ອາຊີບ ເຮັດ ນາ ບ້ານປາກ ສາ ເມືອງປາກກະດິງ ແຂວງ ບໍລິຄຳໄຊ ໃນຂໍ້ກ່າວຫາ ການ ຄ້າ-ຂາຍ ພືດທີ່ໃຫ້ສານເສບຕິດອອກລິດຕໍ່ຈິດ ປະສາດ (ໃບກະທ່ອມ ແລະ ນ້ຳຢາດີໄອ).

ປັດຈຸບັນ, ເຈົ້າໜ້າທີ່ ໄດ້ກັກຕົວ ພວກກ່ຽວທັງ 3 ຄົນໄວ້ ເພື່ອສືບສວນ-ສອບສວນ ແລະ ດຳເນີນຄະດີຕາມ ລະບຽບກົດໝາຍ.

◆ ເຕັກໂນໂລຊີ · 16:10 ໂມງ · ອ່ານ 13 ຄັ້ງ

ຈີນທົດລອງໃຫ້ຫຸ່ນຍົນ 6 ໂຕ ເຮັດວຽກໃນຮ້ານຄ້າສະດວກຊື້ຕະຫຼອດ 24 ຊົ່ວໂມງ ສຸດທ້າຍມີ 2 ໂຕ ບໍ່ຜ່ານການທົດສອບ



ໃນວັນທີ 2–3 ພະຈິກ 2026 ບໍລິສັດ AgiBot ນຳຫຸ່ນຍົນຮູບຮ່າງຄ້າຍມະນຸດ G2 ຈຳນວນ 6 ໂຕ ໄປທົດລອງເຮັດວຽກໃນຮ້ານຈີນສິ່ງຫຸ່ນຍົນຮູບຮ່າງຄ້າຍມະນຸດ 6 ໂຕ ທົດສອບການເຮັດວຽກໃນຮ້ານສະດວກຊື້ຕະຫຼອດ 24 ຊົ່ວໂມງ ສຸດທ້າຍມີ 2 ໂຕບໍ່ຜ່ານການທົດສອບ ໂດຍໂຕໜຶ່ງຕິດຖັງຂີ້ເຫຍື້ອ ຈີນເດີນອອກໄປນອກຮ້ານ ສ່ວນອີກໂຕໜຶ່ງກໍເຕີມສິນຄ້າບໍ່ທັນ.

ພາບຈາກ X: @AGIBOTofficial

ຈີນສົ່ງຫຸ່ນຍົນຮູບຮ່າງຄ້າຍມະນຸດ 6 ໂຕ ທົດສອບເຮັດວຽກໃນຮ້ານສະດວກຊື້ 24 ຊົ່ວໂມງ ສຸດທ້າຍ AI ສອບຕົກ 2 ໂຕ

ທ່າມກາງຄວາມກັງວົນວ່າ ເທັກໂນໂລຊີ AI ແລະ ຫຸ່ນຍົນອັດສະລິຍະອາດເຂົ້າມາແທນທີ່ແຮງງານມະນຸດໃນ

ອະນາຄົດ ແຕ່ການທົດລອງຄັ້ງໜຶ່ງຈາກ ປະເທດຈີນ ກັບສະທ້ອນໃຫ້ເຫັນວ່າ ເຖິງ ແມ່ນຫຸ່ນຍົນຈະຖືກອອກແບບມາເພື່ອ ຊ່ວຍແບ່ງເບົາວຽກງານ ແຕ່ກໍອາດບໍ່ ສາມາດຮັບມືກັບສະຖານະການເຮັດວຽກ ຈິງໄດ້ທຸກຢ່າງ.

ການທົດລອງຄັ້ງນີ້ ໄດ້ນຳເອົາຫຸ່ນ ຍົນ 6 ໂຕ ເຂົ້າໄປເຮັດວຽກໃນຮ້ານ ສະດວກຊື້ຕະຫຼອດ 24 ຊົ່ວໂມງ ແຕ່ ສຸດທ້າຍມີ 2 ໂຕທີ່ບໍ່ສາມາດປະຕິບັດ ໜ້າທີ່ໄດ້ຕາມເປົ້າໝາຍ ໂດຍໜຶ່ງໃນນັ້ນຍັງ ເດີນອອກຈາກຮ້ານໄປ ແລະບໍ່ກັບເຂົ້າມາ ອີກ.

ເຫດການນີ້ເກີດຂຶ້ນທີ່ນະຄອນຊຽງ ໄຮ້ ປະເທດຈີນ ໂດຍບໍລິສັດ Agibot ຜູ້ ຜະລິດຫຸ່ນຍົນຊື່ດັງຂອງຈີນ ໄດ້ຈັດການ ທົດລອງຜ່ານການຖ່າຍທອດສົດ ໃນຊື່ “ Robots Never Clock Out” ຫຼື “ຫຸ່ນຍົນບໍ່ເຄີຍຕອກບັດເລີກວຽກ” ໂດຍ ໃຫ້ຫຸ່ນຍົນຮູບຮ່າງຄ້າຍມະນຸດ 6 ໂຕ ເຂົ້າ ໄປເຮັດວຽກໃນຮ້ານສະດວກຊື້ແຫ່ງໜຶ່ງ ໃນເຂດຊຸຮ່ຍ ເປັນເວລາຕໍ່ເນື່ອງ 24 ຊົ່ວໂມງ ເພື່ອທົດສອບຄວາມສາມາດໃນ ການບໍລິການລູກຄ້າ ແລະຈັດການວຽກ ງານຕ່າງໆພາຍໃນຮ້ານ.

ຫຸ່ນຍົນ 6 ໂຕ ເຮັດວຽກໄດ້ລວມ 1,730 ພາລະກິດ

ຕະຫຼອດການທົດລອງ ຫຸ່ນຍົນທັງ 6 ໂຕ ສາມາດປະຕິບັດພາລະກິດລວມກັນ ໄດ້ເຖິງ 1,730 ຄັ້ງ ປະກອບມີ:

ທັກທາຍລູກຄ້າ 683 ຄັ້ງ

ຫຍິບແລະສົ່ງສິນຄ້າ 369 ຄັ້ງ

ຊົງກາເຟ 147 ຈອກ

ກຽມອາຫານຮ້ອນ 126 ລາຍການ

ກວດສອບຊັ້ນວາງແລະເຕີມສິນຄ້າ 277 ຄັ້ງ

ເຮັດຄວາມສະອາດໂຕະ 128 ຄັ້ງ

ການທົດສອບຍັງຄອບຄຸມ 4 ຊ່ວງ ເວລາສຳຄັນ ໄດ້ແກ່ ຊ່ວງພັກທ່ຽງ, ຊ່ວງ ຕອນແລງ, ຊ່ວງກາງຄືນ ແລະຊ່ວງເຊົ້າທີ່ມີ ລູກຄ້າໜາແໜ້ນ ເພື່ອປະເມີນ ປະສິດທິພາບການເຮັດວຽກໃນ ສະຖານະການທີ່ແຕກຕ່າງກັນ.

2 ໂຕສອບຕົກ ເພາະວຽກຈິງບໍ່ງ່າຍ ຄືທີ່ຄິດ

ເຖິງວ່າພາບລວມຂອງການທົດລອງ ຈະຖືວ່າເປັນຄວາມກ້າວໜ້າອີກຂັ້ນຂອງ ເທັກໂນໂລຊີຫຸ່ນຍົນ ແຕ່ຜົນການທົດສອບ ກໍບໍ່ໄດ້ສົມບູນແບບທັງໝົດ.

ໃນຈຳນວນຫຸ່ນຍົນ 6 ໂຕ ມີພຽງ 4 ໂຕທີ່ສາມາດເຮັດວຽກໄດ້ຕາມເປົ້າໝາຍ ສ່ວນອີກ 2 ໂຕທີ່ຮັບຜິດຊອບວຽກທຳ ຄວາມສະອາດ ແລະກວດສອບຊັ້ນວາງ ສິນຄ້າ ກັບບໍ່ສາມາດປະຕິບັດວຽກໄດ້ຕາມ ທີ່ກຳນົດ.

ການທົດລອງນີ້ສະທ້ອນໃຫ້ເຫັນວ່າ ເຖິງແມ່ນ AI ແລະຫຸ່ນຍົນຈະພັດທະນາ ໄປຢ່າງວ່ອງໄວ ແຕ່ການເຮັດວຽກໃນ ສະພາບແວດລ້ອມຈິງ ຍັງມີຄວາມທ້າທາຍ ຫຼາຍດ້ານ ແລະຫຸ່ນຍົນຍັງຕ້ອງພັດທະນາ ອີກຫຼາຍກ່ອນຈະສາມາດເຮັດວຽກແທນ ມະນຸດໄດ້ຢ່າງເຕັມຮູບແບບ.

ທີ່ ມ າ ພ າ ບ : X – @ AGIBOTofficial

ຫຸ່ນຍົນຮູບຮ່າງຄ້າຍມະນຸດ 6 ໂຕ ສາ ມ າ ດ ເ ຮັ ດ ສ ຳ ເ ລັ ດ ລ ວ ມ 1,730 ພາລະກິດ ພາຍໃນ 24 ຊົ່ວໂມງ

ຫຸ່ນຍົນທັງ 6 ໂຕ ສາມາດເຮັດ ວຽກຕ່າງໆໄດ້ລວມ 1,730 ພາລະກິດ ທັງການຕ້ອນຮັບລູກຄ້າ, ຫຍິບສິນຄ້າ, ຊົງ ກາເຟ, ເຕີມສິນຄ້າ ແລະທຳຄວາມ ສະອາດ.

ທີ່ ມ າ ພ າ ບ : X – @ AGIBOTofficial

ທີ່ນ່າສົນໃຈໄປກວ່ານັ້ນ ຕາມ ລາຍງານຂອງສື ITHome ລະບຸວ່າ ຫຸ່ນ ຍົນທຳຄວາມສະອາດໂຕໜຶ່ງ ໄດ້ອອກ ນອກເສັ້ນທາງປະຕິບັດງານ ຫຼັງຈາກ ເຄື່ອນທີ່ໄປພົບຖັງຂີ້ເຫຍື້ອທີ່ເຕັມຢູ່ ລະຫວ່າງທາງ. ແທນທີ່ຈະຈັດການກັບຖັງ ຂີ້ເຫຍື້ອດັ່ງກ່າວ ຫຸ່ນຍົນກັບປ່ຽນເສັ້ນທາງ ເດີນ ກ່ອນຈະເຄື່ອນຕົວອອກໄປນອກ ຮ້ານສະດວກຊື້ ແລະບໍ່ສາມາດກັບມາຍັງ ຈຸດປະຕິບັດງານເດີມໄດ້ ກາຍເປັນ ເຫດການທີ່ສະທ້ອນເຖິງຂໍ້ຈຳກັດຂອງຫຸ່ນ ຍົນ ເມື່ອຕ້ອງພົບກັບສະຖານະການທີ່ບໍ່ ເປັນໄປຕາມແຜນ.

ສ່ວນຫຸ່ນຍົນອີກໂຕໜຶ່ງ ທີ່ໄດ້ຮັບ ມອບໝາຍໃຫ້ກວດສອບແລະເຕີມສິນຄ້າ ເທິງຊັ້ນວາງ ກໍຖືກປະເມີນວ່າຂາດຄວາມ ກະຕືລືລົ້ນໃນການເຮັດວຽກ ເນື່ອງຈາກບໍ່ ສາມາດກວດສອບແລະຈັດລຽງສິນຄ້າໄດ້ ທັນເວລາ ລວມທັງເຮັດວຽກບໍ່ທັນກັບ ອັດຕາການຈຳໜ່າຍສິນຄ້າພາຍໃນຮ້ານ ສິ່ງ ຜົນໃຫ້ການປະຕິບັດໜ້າທີ່ບໍ່ເປັນໄປຕາມ ມາດຕະຖານທີ່ຄາດຫວັງໄວ້.

ບໍ່ແມ່ນພຽງແຕ່ຈີນ ທີ່ຫຸ່ນຍົນຍັງ ຕ້ອງເພິ່ງພາມະນຸດ

ກ່ ອ ນ ໜ້ າ ນີ້ Dimensional ບໍລິສັດສະຕາດອັບຈາກສະຫະລັດ ອາເມລິກາ ກໍເຄີຍສ້າງຄວາມສົນໃຈ ດ້ວຍ ການປະກາດຮັບສະໝັກພະນັກງານໃຫ້ພາ “ໝາຫຸ່ນຍົນ” ອອກໄປຍ່າງຕາມຖະໜົນ ໃນນະຄອນຊານຟຣານຊິສໂກ ເພື່ອຊ່ວຍ ຝຶກໃຫ້ຫຸ່ນຍົນສາມາດນຳທາງໃນສະພາບ ແວດລ້ອມຂອງເມືອງໄດ້ດ້ວຍຕົນເອງ.

ໂດຍ Stash Pomichter ຜູ້ ກໍ່ຕັ້ງບໍລິສັດ ຍອມຮັບວ່າ:

“ສິ່ງທີ່ພວກເຮົາໄດ້ຮຽນຮູ້ຈາກການ ທົດລອງພາໝາຫຸ່ນຍົນອອກໄປຍ່າງຫຼິ້ນ ກໍຄືລະບົບ AI ຍັງຄວບຄຸມຮາດແວ (Hardware) ໄດ້ບໍ່ດີເທົ່າທີ່ຄວນ.”

ທັງນີ້ ບໍລິສັດ Dimensional ໄດ້ສັ່ງຊື້ໝາຫຸ່ນຍົນຈຳນວນ 100 ໂຕ ແລະຫຸ່ນຍົນຮູບຮ່າງຄ້າຍມະນຸດອີກ 50 ໂຕ ຈາກຜູ້ຜະລິດໃນຈີນ, ເຢຍລະມັນ ແລະສະຫະລັດອາເມລິກາ.

ສຳລັບໝາຫຸ່ນຍົນທີ່ນຳມາໃຊ້ໃນ ການທົດລອງເດີນຕາມຖະໜົນ ມີລາຄາ ປະມານ 2,000 ໂດລາສະຫະລັດຕໍ່ໂຕ ຫຼື ປະມານ ປະມານ 44,998,000 ກີບ

ຜົນການທົດລອງເຫຼົ່ານີ້ສະທ້ອນໃຫ້ ເຫັນວ່າ ເຖິງແມ່ນເທັກໂນໂລຊີຫຸ່ນຍົນຈະ ພັດທະນາໄປຢ່າງວ່ອງໄວ ແຕ່ການນຳໄປ ໃຊ້ງານໃນໂລກຄວາມເປັນຈິງຍັງມີສິ່ງ ທ້າທາຍອີກຫຼາຍດ້ານ ໂດຍສະເພາະການ ຮັບມືກັບເຫດການທີ່ບໍ່ຄາດຄິດ ເຊິ່ງຍັງ ເປັນຂໍ້ຈຳກັດສຳຄັນທີ່ນັກພັດທະນາຕ້ອງ ເລັ່ງແກ້ໄຂ ກ່ອນທີ່ຫຸ່ນຍົນຈະສາມາດ ເຂົ້າມາເຮັດວຽກແທນມະນຸດໄດ້ຢ່າງເຕັມ ຮູບແບບ.

ທີ່ ມ າ : NDTV/interestingengineering

◆ ສາລະໜ້າຮູ້ · 15:29 ໂມງ · ອ່ານ 9 ຄັ້ງ

ເລີ່ມຕົ້ນຈາກ “ພໍ່ແມ່” ເມື່ອຄວາມຮັກໃນຄອບຄົວ ອາດກາຍເປັນຈຸດເລີ່ມຕົ້ນຂອງແຂ້ວແມງ ໂດຍບໍ່ຮູ້ຕົວ



ຫຼາຍຄົນເຂົ້າໃຈວ່າ “ສຸຂະພາບຊ່ອງປາກຂອງເດັກ” ເລີ່ມຕົ້ນເມື່ອເດັກມີແຂ້ວນ້ຳນົມຊີ່ທຳອິດ ຫຼື ວັນທີ່ພໍ່ແມ່ເລີ່ມສອນລູກທຳຄວາມສະອາດຖູແຂ້ວ.

ແຕ່ໃນຄວາມເປັນຈິງ ສຸຂະພາບຊ່ອງປາກຂອງເດັກເລີ່ມຕົ້ນໄວກວ່ານັ້ນຫຼາຍ ແລະ ຈຸດເລີ່ມຕົ້ນທີ່ສຳຄັນທີ່ສຸດອາດບໍ່ແມ່ນແປງສີແຂ້ວ ແຕ່ເປັນພຶດຕິກຳເລັກໆ ນ້ອຍໆ ໃນຊີວິດປະຈຳວັນຂອງຄົນໃນຄອບຄົວ.

ການເປົ່າອາຫານໃຫ້ເຢັນກ່ອນປ້ອນລູກ, ການໃຊ້ບ່ວງຮ່ວມກັນ, ການຈູບປາກລູກ ຫຼື ແມ່ນແຕ່ການປ່ອຍໃຫ້ເດັກຫຼັບຄາຂວດນົມ ລ້ວນແຕ່ເປັນພຶດຕິກຳທີ່ເກີດຈາກ “ຄວາມຮັກ” ແລະ ຄວາມເອົາໃຈໃສ່ຂອງພໍ່ແມ່ ຫຼືຜູ້ເຖົ້າຜູ້ແກ່ໃນຄອບຄົວ.

ແຕ່ໃນດ້ານຊີວະວິທະຍາ ພຶດຕິກຳເຫຼົ່ານີ້ອາດເປັນຊ່ອງທາງສຳຄັນທີ່ເຮັດໃຫ້ແບັກທີເຣຍໃນຊ່ອງປາກຂອງຜູ້ໃຫຍ່ຖ່າຍທອດໄປສູ່ເດັກໄດ້ ໂດຍທີ່ບໍ່ຮູ້ຕົວ.

ໃນໄລຍະຫຼາຍສິບປີຜ່ານມາ ງານວິໄຈດ້ານທັນຕະກຳເດັກເລີ່ມຊີ້ໃຫ້ເຫັນຊັດເຈນຫຼາຍຂຶ້ນວ່າ ບັນຫາແຂ້ວແມງໃນເດັກນ້ອຍບໍ່ແມ່ນພຽງແຕ່ບັນຫາຈາກການກິນຂອງຫວານ ຫຼືການແປງແຂ້ວບໍ່ສະອາດເທົ່ານັ້ນ ແຕ່ຍັງກ່ຽວຂ້ອງກັບ “ລະບົບນິເວດຂອງແບັກທີເຣຍ” ທີ່ເລີ່ມກໍ່ຕົວຕັ້ງແຕ່ໄວທາລິກ ແລະຜູ້ໃຫຍ່ໃນຄອບຄົວກໍເປັນສ່ວນໜຶ່ງທີ່ມີບົດບາດໂດຍກົງໃນການກຳນົດລະບົບນິເວດນັ້ນ.

ຊ່ອງປາກຂອງຄົນເຮົາ ບໍ່ແມ່ນບ່ອນທີ່ປອດເຊື້ອ

ພາຍໃນຊ່ອງປາກຂອງຄົນເຮົາ ມີຈຸລິນຊີຫຼາຍຮ້ອຍຊະນິດອາໄສຢູ່ ທັງແບັກທີເຣຍ, ເຊື້ອຣາ ແລະຈຸລິນຊີຊະນິດອື່ນໆ. ບາງຊະນິດມີປະໂຫຍດ ແຕ່ບາງຊະນິດກ່ຽວຂ້ອງກັບການເກີດພະຍາດແຂ້ວຜຸ ແລະພະຍາດເຫືອກ.

ໜຶ່ງໃນແບັກທີເຣຍທີ່ຖືກສຶກສາຫຼາຍທີ່ສຸດ ຄື Streptococcus mutans (ສະເຕຣັບໂຕຄ໊ອກຄັສ ມິວແທນສ໌) ເຊິ່ງເປັນແບັກທີເຣຍສຳຄັນທີ່ກ່ຽວຂ້ອງກັບການເກີດແຂ້ວຜຸ.

ເຊື້ອຊະນິດນີ້ສາມາດປ່ຽນນ້ຳຕານຈາກອາຫານໃຫ້ກາຍເປັນກົດ ແລະກົດເຫຼົ່ານີ້ຈະຄ່ອຍໆ ກັດກ່ອນຊັ້ນເຄືອບແຂ້ວຈົນເກີດເປັນຮູແຂ້ວຜຸ.

ສິ່ງສຳຄັນຄື ເດັກບໍ່ໄດ້ເກີດມາພ້ອມກັບແບັກທີເຣຍທີ່ກໍ່ໃຫ້ເກີດແຂ້ວຜຸເຫຼົ່ານີ້ ແຕ່ຈະໄດ້ຮັບເຊື້ອຈາກສິ່ງແວດລ້ອມອ້ອມຂ້າງ ໂດຍສະເພາະຈາກຄົນໃກ້ຊິດທີ່ສຸດ ເຊັ່ນ: ພໍ່, ແມ່, ຕຸ້ປູ່, ຕຸ້ຍ່າ, ພໍ່ຕູ້, ແມ່ຕູ້ ຫຼື ຜູ້ທີ່ຮັບຜິດຊອບລ້ຽງດູເດັກເປັນຫຼັກ.

ງານວິໄຈຈຳນວນຫຼາຍເອີ້ນຂະບວນການນີ້ວ່າ “Vertical Transmission” ຫຼື ການຖ່າຍທອດເຊື້ອຈາກຜູ້ໃຫຍ່ສູ່ເດັກໂດຍກົງ.

ຄວາມຮັກທີ່ມາພ້ອມກັບນ້ຳລາຍ

ໜຶ່ງໃນພາບທີ່ພົບເຫັນໄດ້ທົ່ວໄປໃນຫຼາຍຄອບຄົວໄທ ຄືການທີ່ຜູ້ໃຫຍ່ເປົ່າອາຫານໃຫ້ລູກກ່ອນປ້ອນ ເພາະຢ້ານວ່າອາຫານຈະຮ້ອນເກີນໄປ ເຮັດໃຫ້ເດັກກິນບໍ່ໄດ້.

ພຶດຕິກຳນີ້ເບິ່ງຄືເປັນເລື່ອງທຳມະດາຫຼາຍ ແລະ ແທບບໍ່ມີໃຜຄິດວ່າຈະກ່ຽວຂ້ອງກັບບັນຫາແຂ້ວຜຸ. ແຕ່ໃນທາງວິທະຍາສາດ ການເປົ່າອາຫານອາດເຮັດໃຫ້ລະອອງນ້ຳລາຍຂະໜາດນ້ອຍກະຈາຍລົງໃສ່ອາຫານໂດຍກົງ ແລະນ້ຳລາຍກໍເປັນແຫຼ່ງທີ່ມີແບັກທີເຣຍອາໄສຢູ່ຈຳນວນຫຼາຍ.

ຖ້າຜູ້ໃຫຍ່ມີບັນຫາແຂ້ວແມງ, ເຫືອກອັກເສບ ຫຼືມີຄາບແບັກທີເຣຍສະສົມຢູ່ໃນຊ່ອງປາກ ກໍອາດມີເຊື້ອ Streptococcus mutans ໃນປະລິມານສູງກວ່າປົກກະຕິ. ເມື່ອເດັກໄດ້ຮັບເຊື້ອເຫຼົ່ານີ້ຊ້ຳໆ ຕັ້ງແຕ່ຍັງນ້ອຍ ເຊື້ອກໍມີໂອກາດເຂົ້າໄປອາໄສ ແລະ ເພີ່ມຈຳນວນໃນຊ່ອງປາກຂອງເດັກໄດ້ໄວຂຶ້ນ.

ໂດຍສະເພາະໃນຊ່ວງທີ່ແຂ້ວນ້ຳນົມເລີ່ມງອກໃໝ່ໆ ເພາະຜິວໜ້າຂອງແຂ້ວເປັນບ່ອນທີ່ແບັກທີເຣຍສາມາດເກາะຕິດ ແລະ ສະສົມໄດ້ດີ.

ສິ່ງທີ່ໜ້າສົນໃຈຄື ງານວິໄຈຫຼາຍຊິ້ນພົບວ່າ ເດັກທີ່ມີແມ່ເປັນແຂ້ວຜຸຫຼາຍຊີ່ ມັກມີຄວາມສ່ຽງຕໍ່ການເກີດແຂ້ວຜຸສູງກວ່າເດັກທົ່ວໄປຢ່າງມີນັຍສຳຄັນ ເນື່ອງຈາກໄດ້ຮັບເຊື້ອໄວ ແລະ ໄດ້ຮັບເຊື້ອໃນປະລິມານຫຼາຍ.

ບ່ວງຄົນດຽວກັນ ບໍ່ແມ່ນພຽງແຕ່ເລື່ອງຄວາມສະໜິດສະໜົມ

ອີກໜຶ່ງພຶດຕິກຳທີ່ພົບເຫັນໄດ້ເລື້ອຍໆ ຄືການທີ່ພໍ່ແມ່ຊົມອາຫານກ່ອນປ້ອນລູກ ຫຼື ໃຊ້ບ່ວງຄົນດຽວກັນລະຫວ່າງຜູ້ໃຫຍ່ກັບເດັກ.

ໃນຫຼາຍຄອບຄົວ ນີ້ເປັນເລື່ອງປົກກະຕິທີ່ເຮັດສືບຕໍ່ກັນມາຫຼາຍລຸ້ນຄົນ ເພາະຮູ້ສຶກວ່າ “ລູກຂອງເຮົາເອງ” ບໍ່ແມ່ນເລື່ອງສິກກະປົກຫຍັງ.

ແຕ່ໃນມຸມມອງທາງການແພດ ການໃຊ້ພາຊະນະຮ່ວມກັນ ໂດຍມີນ້ຳລາຍປົນເປື້ອນຢູ່ ເປັນໜຶ່ງໃນຊ່ອງທາງສຳຄັນຂອງການຖ່າຍທອດແບັກທີເຣຍ.

ບໍ່ແມ່ນພຽງແຕ່ເຊື້ອທີ່ກໍ່ໃຫ້ເກີດແຂ້ວຜຸເທົ່ານັ້ນ ແຕ່ຍັງລວມເຖິງເຊື້ອບາງຊະນິດທີ່ກ່ຽວຂ້ອງກັບພະຍາດເຫືອກ ຫຼື ແມ່ນແຕ່ເຊື້ອໄວຣັສບາງປະເພດອີກດ້ວຍ.

ແນວໃດກໍຕາມ ຜູ້ຊ່ຽວຊານຈຳນວນຫຼາຍເລີ່ມສະເໜີແນວຄິດໃໝ່ວ່າ ການໃຫ້ຂໍ້ມູນແກ່ຄອບຄົວຄວນເຮັດຢ່າງລະມັດລະວັງ ເພາະຖ້າສື່ສານດ້ວຍຄຳວ່າ “ຫ້າມເຮັດ” ພຽງຢ່າງດຽວ ອາດເຮັດໃຫ້ພໍ່ແມ່ຮູ້ສຶກຜິດ ຫຼື ເກີດການຕໍ່ຕ້ານ ໂດຍສະເພາະໃນຄອບຄົວທີ່ມີຜູ້ສູງອາຍຸຊ່ວຍລ້ຽງລູກ.

ດັ່ງນັ້ນ ຫຼາຍອົງກອນດ້ານທັນຕະກຳເດັກຈຶ່ງເລີ່ມເນັ້ນແນວຄິດ “ການຫຼຸດຄວາມສ່ຽງ” ຫຼາຍກວ່າການຕຳໜິພຶດຕິກຳ.

ຕົວຢ່າງເຊັ່ນ ຫາກບໍ່ສາມາດຫຼີກລ່ຽງການໃຊ້ບ່ວງຮ່ວມກັນໄດ້ ສິ່ງທີ່ສຳຄັນກວ່າຄື ຜູ້ໃຫຍ່ໃນຄອບຄົວຄວນເບິ່ງແຍງສຸຂະພາບຊ່ອງປາກຂອງຕົນເອງໃຫ້ດີ ຫຼຸດຄາບຫີນປູນ, ອຸດແຂ້ວຜຸທີ່ຍັງຄ້າງຢູ່ ແລະ ຮັກສາຄວາມສະອາດຊ່ອງປາກຢ່າງສະໝ່ຳສະເໝີ ເພື່ອຫຼຸດປະລິມານເຊື້ອທີ່ອາດຖ່າຍທອດໄປສູ່ເດັກ.

ເພາະໃນທີ່ສຸດແລ້ວ ບັນຫາບໍ່ໄດ້ຢູ່ທີ່ “ຄວາມຮັກ” ແຕ່ຢູ່ທີ່ສຸຂະພາບຊ່ອງປາກຂອງຜູ້ໃຫຍ່ຕ່າງຫາກ.

ຈູບປາກລູກ: ຄວາມຮັກທີ່ມີມິຕິທາງຊີວະວິທະຍາ

ການຈູບປາກລູກເປັນອີກໜຶ່ງປະເດັນທີ່ຖືກເວົ້າເຖິງຫຼາຍຂຶ້ນໃນປັດຈຸບັນ ໂດຍສະເພາະໃນໂລກອອນລາຍ ທີ່ມັກມີການຖົກຖຽງກັນລະຫວ່າງມຸມມອງດ້ານວັດທະນະທຳ ກັບມຸມມອງທາງການແພດ.

ໃນດ້ານອາລົມ ການຈູບແມ່ນການສະແດງຄວາມຮັກ, ຄວາມຜູກພັນ ແລະ ຄວາມໃກ້ຊິດ.

ແຕ່ໃນດ້ານຊີວະວິທະຍາ ການສຳຜັດກັບນ້ຳລາຍໂດຍກົງ ກໍໝາຍເຖິງການແລກປ່ຽນຈຸລິນຊີຈຳນວນຫຼາຍເຊັ່ນກັນ.

ເຖິງແມ່ນວ່າບໍ່ໄດ້ໝາຍຄວາມວ່າເດັກທຸກຄົນທີ່ຖືກຈູບປາກຈະຕ້ອງເກີດແຂ້ວຜຸກໍຕາມ ແຕ່ຖ້າຜູ້ໃຫຍ່ມີສຸຂະພາບຊ່ອງປາກບໍ່ດີ ຫຼືມີເຊື້ອກໍ່ໂລກໃນປະລິມານສູງ ຄວາມສ່ຽງໃນການຖ່າຍທອດເຊື້ອກໍຈະເພີ່ມຂຶ້ນ.

ດັ່ງນັ້ນ ຜູ້ຊ່ຽວຊານຈຶ່ງມັກແນະນຳແນວທາງທີ່ສົມດຸນ ຄື ບໍ່ຈຳເປັນຕ້ອງຕັດຂາດຄວາມຮັກ ຫຼືຄວາມໃກ້ຊິດກັບລູກ ແຕ່ຄວນເພີ່ມຄວາມໃສ່ໃຈໃນການດູແລສຸຂະພາບຊ່ອງປາກຂອງຜູ້ໃຫຍ່ ແລະ ເລືອກວິທີສະແດງຄວາມຮັກທີ່ຫຼຸດການສຳຜັດນ້ຳລາຍໂດຍກົງ ໃນຊ່ວງທີ່ເດັກຍັງນ້ອຍ.

ປ່ອຍໃຫ້ເດັກຫຼັບຄາເຕົ້ານົມ: ຈຸດເລີ່ມຕົ້ນຂອງແຂ້ວແມງທີ່ພົບໄດ້ເລື້ອຍໆ

ໜຶ່ງໃນພຶດຕິກຳທີ່ມີຄວາມສຳພັນກັບບັນຫາແຂ້ວຜຸໃນເດັກນ້ອຍຢ່າງຊັດເຈນ ຄືການປ່ອຍໃຫ້ເດັກຫຼັບໄປພ້ອມກັບຂວດນົມ.

ຫຼາຍຄອບຄົວເຮັດແບບນີ້ ເພາະຊ່ວຍໃຫ້ລູກຫຼັບງ່າຍ ໂດຍສະເພາະໃນຕອນກາງຄືນ ເວລາທີ່ພໍ່ແມ່ອ່ອນເພຍຈາກການເຮັດວຽກມາທັ້ງມື້.

ແຕ່ໃນທາງທັນຕະກຳ ພຶດຕິກຳນີ້ເປັນປັດໄຈສ່ຽງສຳຄັນຂອງພະຍາດທີ່ເອີ້ນວ່າ Early Childhood Caries (ECC) ຫຼື ພະຍາດແຂ້ວຜຸໃນເດັກນ້ອຍ.

ເມື່ອເດັກດູດນົມແລ້ວຫຼັບໄປ ນ້ຳນົມອາດຕົກຄ້າງຢູ່ອ້ອມໆ ແຂ້ວເປັນເວລາດົນ. ໃນຂະນະດຽວກັນ ໃນເວລານອນການຜະລິດນ້ຳລາຍຈະຫຼຸດລົງ ເຮັດໃຫ້ຊ່ອງປາກຂາດກົນໄກທຳມະຊາດໃນການຊະລ້າງກົດ ແລະເສດອາຫານ.

ດັ່ງນັ້ນ ແບັກທີເຣຍໃນຊ່ອງປາກຈຶ່ງສາມາດນຳໃຊ້ນ້ຳຕານຈາກນົມມາຜະລິດ

ຕໍ່ໜ້າ 8

ເລີ່ມຕົ້ນຈາກ “ພໍແມ່” ເມື່ອຄວາມຮັກໃນຄອບຄົວ ອາດກາຍເປັນຈຸ... (ຕໍ່ຈາກໜ້າ 7)

ກິດ ເພື່ອກັດກ່ອນແຂ້ວໄດ້ຢ່າງຕໍ່ເນື່ອງ ຕະຫຼອດຄືນ.

ຫຼາຍຄົນເຂົ້າໃຈຜິດວ່າ “ນົມບໍ່ເຮັດໃຫ້ແຂ້ວແມງ” ແຕ່ຄວາມຈິງຄື...

ນົມມີນ້ຳຕານທຳມະຊາດທີ່ເອີ້ນວ່າ ແລັກໂຕສ (Lactose) ແລະຖ້ານ້ຳຕານນີ້ຕົກຄ້າງຢູ່ໃນຊ່ອງປາກດົນພໍ ກໍສາມາດກາຍເປັນອາຫານຂອງແບັກທີເຣຍໄດ້ເຊັ່ນກັນ. ໂດຍສະເພາະເມື່ອມີການເພີ່ມນ້ຳຫວານ, ນ້ຳເຜິ້ງ ຫຼືເຄື່ອງດື່ມລົດຫວານລົງໃນຂວດນົມ.

ບັນຫາແຂ້ວຜຸໃນເດັກນ້ອຍມັກເລີ່ມຈາກແຂ້ວໜ້າເທິງ ເພາະເປັນບໍລິເວນທີ່ສຳຜັດກັບນ້ຳນົມຫຼາຍທີ່ສຸດ. ຖ້າປ່ອຍໄວ້ອາດລຸກລາມຢ່າງວ່ອງໄວ ຈົນເຮັດໃຫ້ເດັກເຈັບແຂ້ວ, ບໍ່ສາມາດຄ້ຽວອາຫານໄດ້ ຫຼືສົ່ງຜົນກະທົບຕໍ່ພັດທະນາການດ້ານໂພຊະນາການ.

ຄວາມຫວານໃນໄວເດັກ ອາດກຳນົດທັງສຸຂະພາບ ແລະ ພຶດຕິກຳໃນອະນາຄົດ

ເດັກຈຳນວນຫຼາຍເລີ່ມສຳຜັດກັບນ້ຳຕານຕັ້ງແຕ່ອາຍຸຍັງນ້ອຍ ບໍ່ວ່າຈະເປັນຂະໜົມ, ນ້ຳຫວານ, ຊານົມ, ຂະໜົມກອບ ຫຼືແມ່ນແຕ່ອາຫານເດັກບາງຊະນິດທີ່ມີນ້ຳຕານແຝງຢູ່ໃນປະລິມານສູງ.

ບັນຫາບໍ່ໄດ້ຢຸ່ພຽງແຕ່ເລື່ອງແຂ້ວແມງເທົ່ານັ້ນ ແຕ່ຍັງກ່ຽວຂ້ອງກັບ “ການສ້າງຄວາມຄຸ້ນເຄີຍດ້ານລົດຊາດອາຫານ” ຂອງເດັກໃນໄລຍະຍາວອີກດ້ວຍ.

ສະໝອງຂອງເດັກນ້ອຍຮຽນຮູ້ລົດຊາດໄດ້ຢ່າງວ່ອງໄວ. ຖ້າເດັກຄຸ້ນເຄີຍກັບລົດຫວານຈັດຕັ້ງແຕ່ຕົ້ນ ກໍມີແນວໂນ້ມທີ່ຈະຕິດລົດຫວານ ແລະຕ້ອງການນ້ຳຕານໃນປະລິມານຫຼາຍຂຶ້ນເມື່ອເຕີບໃຫຍ່.

ໃນທາງຊີວະວິທະຍາ ທຸກຄັ້ງທີ່ເດັກກິນອາຫານຫວານ ແບັກທີເຣຍໃນຊ່ອງປາກຈະເລີ່ມຂະບວນການຜະລິດກົດພາຍໃນບໍ່ກີ່ນາທີ ແລະກົດຈະເຮັດໃຫ້ຄ່າ pH ໃນຊ່ອງປາກຫຼຸດລົງ ຈົນເຄືອບແຂ້ວເລີ່ມສູນເສຍແຮ່ທາດ.

ຖ້າສິ່ງນີ້ເກີດຂຶ້ນເລື້ອຍໆຕະຫຼອດມື້ ແຂ້ວກໍຈະບໍ່ມີເວລາຟື້ນຟູສະພາບ. ນັ້ນໝາຍຄວາມວ່າ “ຄວາມຖີ່ໃນການກິນຂອງຫວານ” ມີຄວາມສຳຄັນພໍໆກັບປະລິມານນ້ຳຕານ.

ເດັກທີ່ຈິບນ້ຳຫວານຕະຫຼອດມື້ ຫຼືກິນຂະໜົມຫຼາຍເທື່ອ ເຖິງແມ່ນວ່າແຕ່ລະເທື່ອຈະກິນບໍ່ຫຼາຍ ກໍອາດມີຄວາມສ່ຽງແຂ້ວຜຸສູງກວ່າເດັກທີ່ກິນຂອງຫວານພຽງເທື່ອດຽວແລ້ວຢຸດ.

ແຂ້ວນ້ຳນົມ ບໍ່ໄດ້ສຳຄັນພຽງແຕ່ວ່າ “ສຸດທ້າຍກໍຕ້ອງຫຼຸດ”

ໜຶ່ງໃນຄວາມເຂົ້າໃຈຜິດທີ່ພົບໄດ້ເລື້ອຍໆ ຄືການຄິດວ່າແຂ້ວນ້ຳນົມບໍ່ສຳຄັນ ເພາະສຸດທ້າຍກໍຕ້ອງຫຼຸດຢູ່ດີ.

ແຕ່ຄວາມຈິງແລ້ວ ແຂ້ວນ້ຳນົມມີບົດບາດສຳຄັນຫຼາຍຕໍ່ພັດທະນາການຂອງເດັກ.

ແຂ້ວນ້ຳນົມຊ່ວຍໃນການບົດຄ້ຽວອາຫານ ເຊິ່ງສົ່ງຜົນຕໍ່ໂພຊະນາການ, ການອອກສຽງ, ການພັດທະນາກ້າມຊີ້ນໃບໜ້າ ແລະ ຍັງເຮັດໜ້າທີ່ “ຮັກສາພື້ນທີ່” ໃຫ້ແຂ້ວແທ້ຂຶ້ນມາໃນຕຳແໜ່ງທີ່ຖືກຕ້ອງ.

ຖ້າເດັກສູນເສຍແຂ້ວນ້ຳນົມໄວເກີນໄປຍ້ອນແຂ້ວແມງ ແຂ້ວແທ້ທີ່ຈະຂຶ້ນມາອາດຂຶ້ນຜິດຕຳແໜ່ງ ເກີດບັນຫາແຂ້ວຊ້ອນ, ແຂ້ວກະ ຫຼືການສົບກັນຂອງແຂ້ວທີ່ຜິດປົກກະຕິໃນອະນາຄົດ.

ທີ່ສຳຄັນ ເດັກທີ່ມີອາການເຈັບແຂ້ວຊໍ້າເຮື້ອ ອາດສົ່ງຜົນຕໍ່ການນອນ, ສະມາທິ, ການຮຽນຮູ້ ແລະຄຸນນະພາບຊີວິດໂດຍລວມ.

ງານວິໄຈຫຼາຍຊິ້ນພົບວ່າ ເດັກທີ່ມີບັນຫາແຂ້ວຜຸຮຸນແຮງ ມັກມີບັນຫາດ້ານນ້ຳໜັກຕົວ, ການເຕີບໂຕ ແລະ ການໄປໂຮງຮຽນຫຼາຍກວ່າເດັກທົ່ວໄປ.

ສຸຂະພາບຊ່ອງປາກ ເລີ່ມດູແລໄດ້ຕັ້ງແຕ່ມື້ທຳອິດທີ່ເກີດ

ຫຼາຍຄົນອາດຄິດວ່າ ຕ້ອງລໍຖ້າໃຫ້ແຂ້ວຂຶ້ນກ່ອນ ຈຶ່ງຄ່ອຍເລີ່ມດູແລຊ່ອງປາກ. ແຕ່ຄວາມຈິງແລ້ວ ການດູແລສາມາດເລີ່ມໄດ້ຕັ້ງແຕ່ມື້ທຳອິດຫຼັງເກີດ.

ຜູ້ຊ່ຽວຊານແນະນຳວ່າ ຫຼັງຈາກໃຫ້ນົມລູກ ພໍ່ແມ່ສາມາດໃຊ້ຜ້າສະອາດທີ່ຊຸບນ້ຳຕົ້ມສຸກທີ່ອຸ່ນໆ ເຊັດເຫືອກ, ລີ້ນ ແລະ ກະພຸ້ງແກ້ມຂອງລູກຢ່າງເບົາມື ເພື່ອຊ່ວຍຫຼຸດຄາບນ້ຳນົມ ແລະສ້າງຄວາມຄຸ້ນເຄີຍກັບການດູແລຊ່ອງປາກຕັ້ງແຕ່ຍັງນ້ອຍ.

ເມື່ອແຂ້ວຊີ່ທຳອິດເລີ່ມງອກ ຈຶ່ງຄ່ອຍເລີ່ມໃຊ້ແປງຖູແຂ້ວຂົນນຸ່ມສຳລັບເດັກ.

ການເລີ່ມດູແລຕັ້ງແຕ່ໄວ ບໍ່ໄດ້ມີປະໂຫຍດພຽງແຕ່ດ້ານຄວາມສະອາດເທົ່ານັ້ນ ແຕ່ຍັງຊ່ວຍໃຫ້ເດັກຄຸ້ນເຄີຍກັບກິດຈະວັດການຮັກສາຄວາມສະອາດຊ່ອງປາກ ແລະຫຼຸດການຕໍ່ຕ້ານເມື່ອຕ້ອງຖູແຂ້ວໃນອະນາຄົດ.

ຂໍ້ມູນອ້າງອີງ: aapd / who / mouthhealthy

ຂ່າວຕ່າງປະເທດ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວຕ່າງປະເທດ · 13:33 ໂມງ · ອ່ານ 33 ຄັ້ງ

ອຸທາຫອນ! ສາວຖືກແມ່ສຸດຮັກໜັກ 6 ກິໂລ ຖີບທ້ອງ ຈົນຖົງນ້ຳຮັງໄຂ່ແຕກ ເລືອດອອກໃນຊ່ອງທ້ອງ 1 ລິດ!



ສາວຈີນຖືກແມ່ທີ່ມີນ້ຳໜັກ 6 ກິໂລກຣາມ ຖີບໃສ່ທ້ອງ ຈົນຖົງນ້ຳຄໍປັສລູເທອັມ (Corpus Luteum Cyst) ທີ່ຮັງໄຂ່ແຕກ ເຮັດໃຫ້ເລືອດອອກພາຍໃນຊ່ອງທ້ອງເຖິງ 1,000 ມິນລີລິດ ຫຼື 1 ລິດ ຈົນຕ້ອງຜ່າຕັດສຸກເສີນ. ແພດເຕືອນໃຫ້ລະວັງອາການປວດທ້ອງທີ່ບໍ່ຄວນເບິ່ງຂ້າມ.

ເຫດການທີ່ເກີດຂຶ້ນນີ້ ກາຍເປັນອຸທາຫອນທີ່ຄົນລ້ຽງແມວອາດຄາດບໍ່ເຖິງ. ເມື່ອຍິງສາວຊາວຈີນຄົນໜຶ່ງ ຖືກແມ່ທີ່ລ້ຽງໄວ້ໃນບ້ານໃຊ້ຂາຫຼັງຖີບໃສ່ໜ້າທ້ອງ ຫຼັງຈາກມັນຕົກໃຈຍ້ອນມີຄົນແປກໜ້າມາຢ້ຽມບ້ານ.

ໃນເບື້ອງຕົ້ນ ນາງຄິດວ່າເປັນພຽງອາການບາດເຈັບເລັກໜ້ອຍ ແຕ່ພຽງບໍ່ເທົ່າໃດຊົ່ວໂມງຕໍ່ມາ ນາງກັບມີອາການປວດທ້ອງຢ່າງຮຸນແຮງ ຈົນຕ້ອງຮີບເຂົ້າໂຮງໝໍ ແລະເຂົ້າຮັບການຜ່າຕັດສຸກເສີນ.

ແພດກວດພົບວ່າ ຖົງນ້ຳຄໍປັສລູເທອັມທີ່ຮັງໄຂ່ຂ້າງຂວາແຕກ ເຮັດໃຫ້ເລືອດອອກພາຍໃນຊ່ອງທ້ອງ ແລະບໍລິເວນອຸ້ງເຊິງການ. ໃນລະຫວ່າງການຜ່າຕັດ ພົບເລືອດແລະລິ່ມເລືອດສະສົມຢູ່ພາຍໃນລວມປະມານ 1,000 ມິນລີລິດ ຫຼື 1 ລິດ.

ພາວະດັ່ງກ່າວຖືເປັນອັນຕະລາຍ ເພາະຖ້າບໍ່ໄດ້ຮັບການຮັກສາທັນເວລາ ອາດນຳໄປສູ່ພາວະຊ໊ອກຈາກການເສຍເລືອດໄດ້.

ແມວນ້ຳໜັກ 6 ກິໂລກຣາມ ຕົກໃຈຄົນແປກໜ້າ ກ່ອນໃຊ້ຂາຫຼັງຖີບໃສ່ທ້ອງເຈົ້າຂອງ

ສຳນັກຂ່າວ Jimu News ຂອງຈີນລາຍງານວ່າ ເຫດການນີ້ເກີດຂຶ້ນໃນວັນທີ 14 ຕຸລາ 2026 ທີ່ເມືອງຮຸ້ຍຕີງ ເມືອງຮຸ້ຍໂຈວ ແຂວງກວາງຕຸ້ງ ປະເທດຈີນ.

ຍິງສາວຜູ້ເປັນເຈົ້າຂອງ ຊຶ່ງມີນາມສະກຸນວ່າ ຈູ (Zhu) ໄດ້ລ້ຽງແມວອາຍຸ 6 ປີ ນ້ຳໜັກປະມານ 6 ກິໂລກຣາມ ໄວ້ພາຍໃນບ້ານ.

ໃນມື້ເກີດເຫດ ມີຄົນແປກໜ້າມາທີ່ບ້ານ ເຮັດໃຫ້ແມວເກີດອາການຕົກໃຈ ແລະຄຽດ. ເມື່ອນາງຈູເຂົ້າໄປຈັບຂາໜ້າຂອງແມວ ມັນຈຶ່ງໃຊ້ຂາຫຼັງຖີບເຂົ້າໃສ່ບໍລິເວນໜ້າທ້ອງຂອງນາງຢ່າງແຮງ ຈົນເຮັດໃຫ້ຜິວໜັງເປັນບາດແຜ ແລະມີຮອຍຂີດຂ່ວນ 2 ຮອຍ.

ຫຼັງເກີດເຫດ ນາງຮູ້ສຶກປວດທ້ອງເລັກນ້ອຍ ແຕ່ບໍ່ໄດ້ຄິດວ່າຈະເປັນອາການຮ້າຍແຮງ ຈຶ່ງບໍ່ໄດ້ໄປໂຮງໝໍທັນທີ.

ຈົນຮອດຊ່ວງເຊົ້າມືດຂອງວັນທີ 15 ຕຸລາ ອາການປວດທ້ອງກັບຮຸນແຮງຂຶ້ນ ຈົນເຮັດໃຫ້ນາງຕື່ນຈາກການນອນ ແລະຕ້ອງຟ້າວໂທຂໍຄວາມຊ່ວຍເຫຼືອ ເພື່ອນຳຕົວສົ່ງໂຮງໝໍ.

ແພດພົບຖົງນ້ຳຮັງໄຂ່ແຕກ ເລືອດອອກພາຍໃນ 1,000 ມິນລີລິດ

ເມື່ອ ນາງ ຈູ ຖືກນຳສົ່ງໄປຍັງໂຮງໝໍປະຊາຊົນເມືອງຮຸ້ຍຕີງ ແພດໄດ້ໃຫ້ຢາບັນເທົາອາການປວດ ແລະກວດດ້ວຍເຄື່ອງ CT Scan ກ່ອນພົບວ່າ ນາງມີພາວະຖົງນ້ຳຄໍປັສລູເທອັມທີ່ຮັງໄຂ່ຂ້າງຂວາແຕກ (Ruptured Corpus Luteum Cyst).

ເນື່ອງຈາກມີເລືອດອອກພາຍໃນຊ່ອງທ້ອງຈຳນວນຫຼາຍ ທີມແພດຈຶ່ງຕັດສິນໃຈຜ່າຕັດສ່ອງທ້ອງສຸກເສີນ ເພື່ອກວດຫາຈຸດທີ່ມີເລືອດອອກ.

ໃນລະຫວ່າງການຜ່າຕັດ ແພດສາມາດນຳເອົາເລືອດແລະລິ່ມເລືອດທີ່ສະສົມຢູ່ພາຍໃນຊ່ອງທ້ອງ ແລະອຸ້ງເຊິງການອອກໄດ້ປະມານ 1,000 ມິນລີລິດ.

ຈາກນັ້ນ ແພດໄດ້ຜ່າຕັດຮັກສາຖົງນ້ຳທີ່ແຕກ ແລະສ້ອມແປງເນື້ອເຍື່ອບໍລິເວນຮັງໄຂ່ ພ້ອມທັງໃຫ້ເມັດເລືອດແດງເຂັ້ມຂຸ້ນ 2 ຖົງ ແລະພລາສມາອີກ 400 ມິນລີລິດ ເພື່ອທົດແທນເລືອດທີ່ສູນເສຍໄປ ແລະປະຄັບປະຄອງອາການຂອງຄົນເຈັບ.

ໂຊກດີທີ່ທີມແພດສາມາດຮັກສາໄດ້ທັນເວລາ ເຮັດໃຫ້ອາການຂອງນາງຈູດີຂຶ້ນຕາມລຳດັບ ແລະສາມາດອອກຈາກໂຮງໝໍໄດ້ໃນວັນທີ 18 ຕຸລາ 2026.

ຖົງນ້ຳຄໍປັສລູເທອັມແຕກ ແມ່ນຫຍັງ? ເປັນຫຍັງຈຶ່ງເຮັດໃຫ້ເລືອດອອກຫຼາຍໄດ້?

ທ່ານ ໝໍຍິງ ໂຈວ ຮຸ້ຍເຈຍ (Zhou Huijie) ແພດປະຈຳພະແນກສູຕິນະລິເວດ ໂຮງໝໍປະຊາຊົນເມືອງຮຸ້ຍຕີງ ອະທິບາຍວ່າ:

ຄໍປັສລູເທອັມ (Corpus Luteum) ຫຼື ກ້ອນເນື້ອສີເຫຼືອງ ແມ່ນໂຄງສ້າງທີ່ເກີດຂຶ້ນຕາມທຳມະຊາດພາຍໃນຮັງໄຂ່ ຫຼັງຈາກການຕົກໄຂ່ ໂດຍມີໜ້າທີ່ຜະລິດຮໍໂມນໂປຣເຈສເຕີໂຣນ (Progesterone) ເພື່ອກຽມເຍື່ອບຸໂພງມົດລູກໃຫ້ພ້ອມສຳລັບການຖືພາ.

ໃນບາງຮອບເດືອນ ກ້ອນເນື້ອສີເຫຼືອງອາດມີຂອງແຫຼວ ຫຼືເລືອດສະສົມຢູ່ພາຍໃນ ຈົນກາຍເປັນຖົງນ້ຳຄໍປັສລູເທອັມ ຊຶ່ງເປັນຖົງນ້ຳຮັງໄຂ່ຊະນິດໜຶ່ງທີ່ກ່ຽວຂ້ອງກັບການເຮັດວຽກຕາມທຳມະຊາດຂອງຮັງໄຂ່.

ຖົງນ້ຳປະເພດນີ້ສ່ວນໃຫຍ່ສາມາດຫົດຫາຍໄປເອງ ແລະບໍ່ກໍ່ໃຫ້ເກີດອັນຕະລາຍ.

ແຕ່ຖ້າຖົງນ້ຳມີເລືອດສະສົມຢູ່ຫຼາຍ ແລະເກີດການແຕກຂຶ້ນ ກໍອາດເຮັດໃຫ້ເລືອດໄຫຼອອກສູ່ຊ່ອງທ້ອງໄດ້.

